ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 041 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 22 APR 2020

# ໜັງສືແຈ້ງເຊີນ

**ເຖິງ:** ທ່ານ ຜູ້ອຳນວຍການໂຮງພິມ ພາກລັດ ແລະ ເອກະຊົນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງໃບປະເມີນລາຄາ ແບບຟອມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາໂຮງພິມ ທີ່ຜະລິດສິ່ງພິມແບບຟອມຕ່າງໆ ທີ່ມີຄວາມສົນໃຈຍື່ນຊອງປະເມີນລາຄາ **ແບບຟອມ: ໃບຢັ້ງຢືນທຸລະກຳ** ຕາມແບບ, ຂະໜາດ ທີ່ ທຄຕລ ກຳນົດສົ່ງໃຫ້, ການຍື່ນຊອງປະເມີນລາຄາຕ້ອງປະກອບເອກະສານຕາມເງື່ອນໄຂດັ່ງລຸ່ມນີ້ :

1. <u>**ຊອງທີ 1**</u> ປະກອບມີ :
   - 1.1 ສຳເນົາໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການມອບພັນທະອາກອນຢ່າງໜ້ອຍ 3 ປີຍ້ອນຫຼັງ ແລະ ຜົນງານປະສົບການຂອງໂຮງພິມໃນໄລຍະຜ່ານມາຢ່າງນ້ອຍ 3 ປີຂຶ້ນໄປ.
   - 1.2 ຕ້ອງຜະລິດຕົວຢ່າງແບບຟອມ ມາໃຫ້ພ້ອມ 10 ຊຸດ ເພື່ອຈະໄດ້ທົດລອງນຳໃຊ້ເຂົ້າລະບົບຕາມຂະໜາດ Art work ຂະໜາດ 22 x 17 cm, ຍີ່ຫໍ້ເຈ້ຍເຄມີ 2 ໃບ/ຊຸດ (ຕ້ອງເປັນເຈ້ຍຍີ່ຫໍ້ Oji ເກດ A) , ພິມດ້ວຍນ້ຳມຶກຍີ່ຫໍ້ດີ, ທົນທານ, ສີຊັດເຈນດີ, ຕິດກາວຫົວ 2 ໃບ/ຊຸດ, ຮັບປະກັນຄຸນນະພາບ 8-10 ປີ .
2. <u>**ຊອງທີ 2**</u> ປະກອບມີ :
   - 2.1 ໃບປະເມີນລາຄາເປັນສະກຸນເງິນກີບ ລວມອາກອນມູນຄ່າເພີ່ມ 10%.
   - 2.2 ໃບປະເມີນລາຄາຕ້ອງລະບຸລະອຽດ: ຂະໜາດ 22 x 17 cm, ຍີ່ຫໍ້ເຈ້ຍເຄມີ 2 ໃບ/ຊຸດ (ຕ້ອງເປັນເຈ້ຍຍີ່ຫໍ້ Oji ເກດ A) , ພິມດ້ວຍນ້ຳມຶກຍີ່ຫໍ້ດີ, ທົນທານ, ສີຊັດເຈນດີ, ຕິດກາວຫົວ 2 ໃບ/ຊຸດ, ໃນຈຳນວນ 2.000.000 ຊຸດ/ຄັ້ງ, ຮັບປະກັນຄຸນນະພາບ 8-10 ປີ ແລະ ກຳນົດເວລາຜະລິດສຳເລັດພ້ອມຈັດສົ່ງເຂົ້າສາງ ທຄຕລ.
   - 2.3 ໂຮງພິມທີ່ຈະຍື່ນຊອງປະເມີນຕ້ອງວາງເງິນຄ້ຳປະກັນການປະເມີນ 2% ຂອງມູນຄ່າທັງໝົດຕາມໃບປະເມີນລາຄາ, ຈາກບັນຊີເງິນຝາກ ຫຼື ໜັງສືຄ້ຳປະກັນຈາກທະນາຄານ ກຳນົດນຳໃຊ້ເຖິງ ວັນທີ 29/05/2020, ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເງິນ ຫຼື ໜັງສືຄ້ຳປະກັນດັ່ງກ່າວຄືນ.

<u>**ໝາຍເຫດ:**</u>

1. ກຳນົດການຍື່ນຊອງປະເມີນລາຄາທັງ 2 ຊອງແມ່ນວັນທີ 05/05/2020 ປິດຮັບຊອງເວລາ 14.00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.
2. ໂຮງພິມທີ່ຊະນະການປະມູນ ແມ່ນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າໃຊ້ຈ່າຍໃນການຈົດທະບຽນສັນຍາ, ຄ່າສິ້ນເປືອງອື່ນໆ ແມ່ນເປັນຄວາມຮັບຜິດຊອບຂອງໂຮງພິມ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານທີ່ ສົນໃຈ ຮັບຊາບ ແລະ ຍື່ນຊອງເຂົ້າຮ່ວມການປະເມີນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ບັນທະລາດ ແກ້ວປະເສີດ**

ຕິດຕໍ່ພົວພັນ:
ຂະແໜງສະໜອງວັດຖຸເຕັກນິກ
021 213200 ຕໍ່ 414
**ໝາຍເຫດ:** Art work ຫຼື ແບບຟອມ ຕົວຈິງສາມາດເຂົ້າມາພົວພັນເອົາໄດ້ທີ່ພະແນກຫ້ອງການ ຊັ້ນ 4C